# ປະກາດແຈ້ງກ່ຽວກັບການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າ

## ພາສີໃບອະນຸຍາດດ້ານທຸລະກິດຂອງເມືອງພອທແລນດ໌

## --- ຈຳເປັນຕ້ອງດຳເນີນການ ---

## ໂຄງການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າ

ພວກເຮົາກຳລັງແຈ້ງໃຫ້ທ່ານຮູ້ວ່າ ກົດຂໍ້ບັງຄັບໃໝ່ຂອງເມືອງພອທແລນດ໌ ລະຫັດ 7.02.890 ກຳນົດໃຫ້ເຈົ້າຂອງອະສັງຫາລິມະຊັບທີ່ໃຫ້ເຊົ່າເພື່ອຢູ່ອາໄສທີ່ຕັ້ງຢູ່ໃນເມືອງພອທແລນດ໌ຈຳຕ້ອງຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າທັງໝົດໂດຍການຍື່ນຟອມ Schedule R ປະຈຳປີ ຊຶ່ງລວມມີ ທີ່ຢູ່ຂອງເຮືອນເຊົ່າທຸກແຫ່ງທີ່ເປັນເຈົ້າຂອງຢູ່ພາຍໃນເມືອງ.

ຈຸດປະສົງຂອງໂຄງການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າຂອງເມືອງພອທແລນດ໌ແມ່ນເພື່ອສ້າງລາຍການຂອງເຮືອນເຊົ່າໃນປັດຈຸບັນທີ່ເຊື່ອຖືໄດ້ພາຍໃນເມືອງ.

ການຂຶ້ນທະບຽນອະສັງຫາລິມະຊັບທີ່ໃຫ້ເຊົ່າເພື່ອເປັນທີ່ຢູ່ອາໄສ ແມ່ນ **ກຳນົດ** ໄວ້ສຳລັບເຈົ້າຂອງ ຫຼື ຜູ້ຈັດການອະສັງຫາລິມະຊັບທີ່ໃຫ້ເຊົ່າເພື່ອການຢູ່ອາໄສທຸກຄົນສຳລັບປີພາສີທີ່ເລີ່ມຕົ້ນໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2018 (ມີກຳນົດຍື່ນສຳລັບຜູ້ຍື່ນສ່ວນຫຼາຍບໍ່ເກີນວັນຈັນທີ 15 ເມສາ 2019). ກິດຈະກຳດ້ານການເຊົ່າ ແລະທີ່ຢູ່ສະຖານທີ່ຕັ້ງຂອງເຮືອນເຊົ່າຈຳຕ້ອງໄດ້ຖືກຍື່ນໃນຟອມ Schedule R ແລະຄັດຕິດໄປກັບຟອມເສັຽພາສີໃບອະນຸຍາດທຸລະກິດ ຫຼື ຄຳຮ້ອງຂໍການຍົກເວັ້ນປະຈຳປີ.

ສຳລັບປີພາສີ 2018, ບໍ່ມີຄ່າທຳນຽມທີ່ກ່ຽວພັນກັບໂຄງການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າ.   ຢ່າງໃດກໍຕາມ, ການບົກຜ່ອງບໍ່ຍື່ນຟອມເສັຽພາສີ ແລະເອກະສານທີ່ກ່ຽວຂ້ອງກັບພາສີ, ລວມເຖິງຟອມ Schedule R, ອາດສົ່ງຜົນໃຫ້ເກີດການລົງໂທດ.

**ເພື່ອເປັນການປະຕິບັດຕາມຂໍ້ກຳນົດການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າ ກະຣຸນາດຳເນີນການ 3 ຂັ້ນຕອນງ່າຍໆ ເຫຼົ່ານີ້ໃຫ້ສຳເລັດ:**

1. ໄປທີ່ເວັບໄຊ www.portlandoregon.gov/revenue/29558
2. ດາວໂຫຼດແລະປະກອບຂໍ້ມູນໃສ່ຟອມ **Schedule R** – ການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າ
3. ສົ່ງຟອມ Schedule R ທີ່ປະກອບສຳເລັດແລ້ວໄປທາງໄປສະນີ ພ້ອມກັບຟອມຍື່ນເສັຽພາສີໃບອະນຸຍາດທຸລະກິດຂອງທ່ານ ຫຼື ຄຳຮ້ອງຂໍເອົາການຍົກເວັ້ນຂອງທ່ານໄປທີ່:

    City of Portland Revenue Division
    111 SW Columbia St., Suite 600
    Portland, OR 97201-5840

ສຳລັບຄວາມຊ່ວຍເຫຼືອເພີ່ມເຕີມ ຫຼື ຄຳຖາມຕ່າງໆ ກ່ຽວກັບໂຄງການຂຶ້ນທະບຽນທີ່ພັກອາໄສປະເພດໃຫ້ເຊົ່າ ຫຼືຟອມ  Schedule R, ໂທຣ (503) 823-5157.

ສຳລັບບໍລິການແປພາສາ ຫຼື ນາຍພາສາ ໂທຣ **503-823-5157**

**www.portlandoregon.gov/revenue/78312**

ສາຍ TTY ທີ່ເບີໂທຣ **503-823-6868** ຫຼືບໍລິການສົ່ງຕໍ່ຂໍ້ຄວາມຂອງຣັຖອໍຣິກອນ ທີ່ເບີ **711**

503-823-5157: Traducción e interpretación | Chuyển Ngữ hoặc Phiên Dịch | 翻译或传译

Письменныйили устный перевод | 翻訳または通訳 | Traducere sau Interpretare

번역 및 통역 | Письмовий або усний переклад | Turjumida ama Fasiraadda |

الترجمة التحريرية والشفوية | ການແປພາສາ ຫຼື ການອະທິບາຍ

---